ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

# ຊາວໜຸ່ມຣາກຖານ ທຫລ ສຳມະນາ ຫົວຂໍ້: "ການເປີດເສລີການບໍລິການທາງການເງິນຂອງ ທຫລ ໃນຂອບອາຊຽນ"




ຊາວໜຸ່ມຣາກຖານ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງການສຳມະນາ ຫົວຂໍ້: ການເປີດເສລີການບໍລິການທາງການເງິນຂອງ ທຫລ ໃນຂອບອາຊຽນໃນວັນທີ 29 ພຶດສະພາ 2019 ທີ່ຫ້ອງປະຊຸມ ທຫລ ນະຄອນຫຼວງວຽງຈັນ, ໂດຍການກ່າວເປີດຂອງສະຫາຍນາງ ສອນນາລີ ພິມມະໄຊ, ຄະນະບໍລິຫານງານຊາວໜຸ່ມຣາກຖານ ທຫລ, ພ້ອມນີ້ກໍ່ມີບັນດາສະມາຊິກຊາວໜຸ່ມທີ່ມາຈາກບັນດາກົມພາຍໃນ ທຫລ ເຂົ້າຮ່ວມຈຳນວນ 64 ທ່ານ.

ການສຳມະນາຄັ້ງນີ້, ນັກສຳມະນາກອນໄດ້ຮັບຮູ້ ແລະ ເຂົ້າໃຈຕື່ມກ່ຽວກັບຄວາມໝາຍຄວາມສຳຄັນຂອງການເປີດເສລີການບໍລິການທາງການເງິນຂອງ ທຫລ ໃນຂອບອາຊຽນເຊິ່ງເປັນວຽກງານຍຸດທະທະສາດສຳຄັນໃນການເຊື່ອມໂຍງກັບສາກົນ ທັງເປັນການຊຸກຍູ້ໃນການພັດທະນາຂະແໜງການເງິນຂອງ ສປປ ລາວ ກໍ່ຄື ທຸລະກິດທະນາຄານ, ປະກັນໄພ ແລະ ຫຼັກຊັບ. ພ້ອມກັນນັ້ນ, ບັນດາສະຫາຍກໍ່ໄດ້ຊາບຕື່ມກ່ຽວກັບ ຄວາມເປັນມາ ແລະ ການພັດທະນາວຽກງານດັ່ງກ່າວໃນໄລຍະຜ່ານມາ; ຮູ້ໄດ້ເຖິງ ສິດ ແລະ ພັນທະ ທີ່ ສປປ ລາວ ໄດ້ຮັບຮູ້, ຄວາມຄືບໜ້າ, ສະພາບການໃນປະຈຸບັນ ລວມທັງທິດທາງໃນຕໍ່ໜ້າໃນການເປີດເສລີການບໍລິການທາງການເງິນ.

**+ ຂ່າວ-ພາບ: ທ ສົມພິດ ທຳມະວົງ**